**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ
ພະແນກແຜນການ ແລະ ການລົງທຶນ — ເລກທີ 487 /ພຜທ.ຫລປ.ນວ
ຫ້ອງການບໍລິການ ການລົງທຶນປະຕູດຽວ — ວັນທີ 3 ກໍລະກົດ 2024.

ຂາເຂົ້າ ສຳນັກງານຫ້ອງການປົກຄອງ ນວ
ໜ່ວຍງານບໍລິການປະຕູດຽວ
ເລກທີ:......3021....
ວັນທີ:....4...7...24...

**ຮຽນ:** ທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ, **ທີ່ເຄົາລົບ ແລະ ນັບຖືຢ່າງສູງ.**

**ເລື່ອງ:** ຂໍຮຽນລາຍງານ ແລະ ຂໍທິດຊີ້ນຳກ່ຽວກັບ ການແກ້ໄຂຄຳຮ້ອງຂອງອົງການປົກຄອງບ້ານດວງບຸດດີ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ໃນການຂໍສິດນຳໃຊ້ທີ່ດິນຄືນໃຫ້ແກ່ປະຊາຊົນ.

- ອີງຕາມ ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ໜັງສືທາງລັດຖະການ ຂອງຫ້ອງການ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 0065/ກຊສ.ຫກ, ລົງວັນທີ 11 ມັງກອນ 2024;
- ອີງຕາມ ສະໂນດນຳສົ່ງ ຂອງຫ້ອງວ່າການ ນະຄອນຫຼວງວຽງຈັນ ສະບັບເລກທີ 375/ຫວນວ, ລົງວັນທີ 29 ກຸມພາ 2024.

ພະແນກແຜນການ ແລະ ການລົງທຶນ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ຕໍ່ກັບການແກ້ໄຂຄຳຮ້ອງຂອງອົງການປົກຄອງບ້ານດວງບຸດດີ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ. ເຊິ່ງໃນໄລຍະຜ່ານມາ, ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ໄດ້ເຮັດໜັງສືສະເໜີຫາ ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 333/ບພປ. ລົງວັນທີ 15 ທັນວາ 2021 ເພື່ອຂໍໃຫ້ກວດກາຄືນ ແລະ ແກ້ໄຂບັນຫາຂໍ້ຂັດແຍ່ງທີ່ດິນລັດ ທີ່ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ໄດ້ສຳປະທານປູກໄມ້ວິກໃນເນື້ອທີ່ 68 ເຮັກຕາ 5.822 ຕາແມັດ ຢູ່ບ້ານຫາດກ້ຽງ (ບ້ານດວງບຸດດີ), ເມືອງໄຊທານີ, ນະຄອນຫຼວງວຽງຈັນ. ຕໍ່ກັບບັນຫາດັ່ງກ່າວ ຫ້ອງວ່າການ ນະຄອນຫຼວງວຽງຈັນ ໄດ້ມີໜັງສືທາງລັດຖະການ ສະບັບເລກທີ 2157/ຫວນວ, ລົງວັນທີ 22 ທັນວາ 2021 ມາຍັງພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ "ເພື່ອເປັນໃຈກາງ ໃນການແກ້ໄຂບັນຫາ ແລະ ຄົ້ນຄວ້າແຕ່ງຕັ້ງຄະນະເຮັດວຽກຮ່ວມເປັນລະບົບກັບບໍລິສັດດັ່ງກ່າວ. ໂດຍມອບໃຫ້ເມືອງເປັນຫົວໜ້າຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຄັກແນ່ ເພາະກົນໄກການເຮັດວຽກຮ່ວມກັບນັກລົງທຶນເຫັນວ່າມີຫຼາຍບັນຫາພົບຄວາມຫຍຸ້ງຍາກ ແລະ ກົນໄກປະສານງານທີ່ບໍ່ຄ່ອງຕົວ".

ຈາກນັ້ນ, ພະແນກແຜນການ ແລະ ການລົງທຶນ, ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນນະຄອນຫຼວງວຽງຈັນ ໄດ້ສົ່ງໜັງສືທາງລັດຖະການ ສະບັບເລກທີ 150/ພຜທ.ຫລປ.ນວ, ລົງວັນທີ 11 ມີນາ 2022 ເຊິ່ງມີເນື້ອໃນວ່າ: "ເນື່ອງຈາກວ່າໃນໄລຍະຜ່ານມາແມ່ນຂັ້ນເມືອງເປັນຜູ້ຄົ້ນຄວ້າແກ້ໄຂບັນຫາຂໍ້ຂັດແຍ່ງທີ່ດິນລັດ ທີ່ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ໄດ້ສຳປະທານປູກໄມ້ວິກ ຫາ ທ່ານ ເຈົ້າເມືອງໄຊທານີ. ສະນັ້ນ, ເພື່ອປະຕິບັດ ໜັງສືທາງລັດຖະການ ສະບັບເລກທີ 2157/ຫວນວ, ລົງວັນທີ 22 ທັນວາ 2021 ໃນການຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວ ຈິ່ງສະເໜີມາຍັງທ່ານໃນການແກ້ໄຂບັນຫາ ແລະ ຄົ້ນຄວ້າແຕ່ງຕັ້ງຄະນະເຮັດວຽກຮ່ວມກັບບໍລິສັດດັ່ງກ່າວ".

ໃນໄລຍະຜ່ານມານາຍບ້ານດວງບຸດດີ ຍື່ນໜັງສືສະເໜີໂຕ້ແຍ່ງຕໍ່ໜັງສື ຂອງຮອງອຳນວຍການບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ທີ່ຮຽນຫາທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ຫົວໜ້າພະແນກກວດກາລັດ ຕາມໜັງສືສະເໜີ ສະບັບເລກທີ 333/ບພປ. ລົງວັນທີ 15 ທັນວາ 2021 ເພື່ອຂໍໃຫ້ກວດກາຄືນ ແລະ ແກ້ໄຂບັນຫາຂໍ້ຂັດແຍ່ງທີ່ດິນລັດ ທີ່ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ໄດ້ສຳປະທານປູກໄມ້ວິກໃນເນື້ອທີ່ 68 ເຮັກຕາ 5.822 ຕາແມັດ ຢູ່ບ້ານຫາດກ້ຽງ (ບ້ານດວງບຸດດີ), ເມືອງໄຊທານີ, ນະຄອນຫຼວງວຽງຈັນ. ຕໍ່ກັບບັນຫາດັ່ງກ່າວ, ມີໜັງສືທາງລັດຖະການ ສະບັບເລກທີ

917/ຫວນອ, ລົງວັນທີ 26 ເມສາ 2022 ເຊິ່ງມີເນື້ອໃນວ່າ: "ເຫັນວ່າເປັນບັນຫາທີ່ແກ່ຍາວມາດົນ, ສະເໜີໃຫ້ເມືອງໄຊທານີ ເປັນເຈົ້າການສົມທົບກັບ ພະແນກພາຍໃນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກແຜນການ ແລະ ການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ແກ້ໄຂ ໃຫ້ຂາດຕົວ".

ຈາກນັ້ນ, ອົງການປົກຄອງເມືອງໄຊທານີ ກໍໄດ້ເປີດກອງປະຊຸມ ໃນວັນທີ 28 ສິງຫາ 2023 ແລະ ໄດ້ເປັນເອກະພາບ ດັ່ງນີ້:

1) ຕໍ່ກັບປະຊາຊົນທີ່ໄດ້ເຂົ້າໄປຄຸ້ມຄອງນຳໃຊ້ທີ່ດິນໃນສວນໄມ້ອີກນັ້ນ ແມ່ນໃຫ້ໂຈະການເຂົ້າໄປຄຸ້ມຄອງ ບໍ່ໃຫ້ເຂົ້າໄປບຸກເບີກພັດທະນາຕອນດິນ ໃຫ້ລໍຖ້າທິດຊີ້ນຳຈາກຂັ້ນເທິງເສຍກ່ອນ ເພາະວ່າຕອນດິນດັ່ງກ່າວແມ່ນໄດ້ອອກແຜນທີ່ດິນລັດ ແຜນທີ່ໃບທີ A258-010 ມີເນື້ອທີ່ 68 ເຮັກຕາ 5.822 ຕາແມັດ ຕາມຂໍ້ຕົກລົງຂອງທ່ານເຈົ້າເມືອງໄຊທານີ ສະບັບເລກທີ 1887/ຈມ.ຊທນ, ລົງວັນທີ 4 ທັນວາ 2018, ສ່ວນຜົນລະປູກຂອງປະຊາຊົນທີ່ປູກນັ້ນ ແມ່ນໃຫ້ລໍຖ້າເກັບກ່ຽວເອົາ ຜົນລະປູກອອກກ່ອນ ພາຍຫຼັງເກັບກ່ຽວແລ້ວແມ່ນບໍ່ໃຫ້ສືບຕໍ່ປູກອີກ ເພື່ອບໍ່ໃຫ້ເກີດເປັນຂໍ້ຂັດແຍ່ງກັບບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ;
2) ສ່ວນບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ທີ່ເຂົ້າໄປບຸກເບີກເນື້ອທີ່ດິນເພື່ອປູກໄມ້ນັ້ນ ແມ່ນໃຫ້ໂຈະໄວ້ເສຍກ່ອນ ເຫັນດີໃຫ້ເກັບກູ້ໄມ້ທີ່ປູກ ແລະ ໄມ້ທີ່ຢູ່ໃນເຂດຕັດອອກຈາກຕອນດິນລັດ;
3) ມອບໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງໄຊທານີ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງ ກວດກາເກັບກຳຂໍ້ມູນ ແລະ ວັດແທກທີ່ດິນຂອງທ້າວ ສົມສະຫວັນ ຜາງນົວົງ ຄືນໃໝ່ ແລ້ວລາຍງານໃຫ້ຫ້ອງວ່າການ ເມືອງເພື່ອສັງລວມເປັນບົດລາຍງານໃນນາມເຈົ້າເມືອງຫາທ່ານເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອມີທິດຊີ້ນຳ.

ຕໍ່ກັບມະຕິກອງປະຊຸມດັ່ງກ່າວ, ບໍລິສັດ ບົວລະພາ-ກະສິກຳ ປ່າໄມ້ ຈຳກັດ ຍື່ນໜັງສືສະເໜີ ເພື່ອຂໍສືບຕໍ່ສຳປະທານຕອນດິນ 68 ເຮັກຕາ 5.822 ຕາແມັດ ທີ່ຂຶ້ນກັບການຄຸ້ມຄອງຂອງບ້ານດວງບຸດດີ, ເມືອງໄຊທານີ ນະຄອນຫຼວງວຽງຈັນ ສະບັບເລກທີ 377/ບພກປ, ລົງວັນທີ 14 ມິຖຸນາ 2022. ຕໍ່ກັບການສະເໜີດັ່ງກ່າວ, ໃນວັນທີ 27 ກັນຍາ 2023 ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄດ້ເປີດກອງປະຊຸມຄົ້ນຄວ້າປຶກສາຫາລື ແລະ ເປັນເອກະພາບກັນ ດັ່ງນີ້:

1) ຕໍ່ກັບການສະເໜີຂໍສືບຕໍ່ສຳປະທານທີ່ດິນລັດ ໃນເນື້ອທີ່ 68 ເຮັກຕາ 5.822 ຕາແມັດ ເພື່ອລົງທຶນປູກໄມ້ອີກ, ພື້ນຖານແມ່ນບໍ່ຂັດຂ້ອງ ບົນຫຼັກການຫັນເຂົ້າສູ່ລະບຽບກົນໄກ, ຂັ້ນຕອນຂອງການລົງທຶນຕາມທີ່ກົດໝາຍ ແລະ ລະບຽບການກຳນົດໄວ້;
2) ແຕ່ເນື່ອງຈາກວ່າໂຄງການດັ່ງກ່າວ ຜ່ານມາໄດ້ມີສັນຍາໃຫ້ດິນເພື່ອສຳປະທານດິນ ລະຫວ່າງຄະນະກຳມະການປົກຄອງບ້ານຫາດກ້ຽງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ແລະ ທ່ານ ບີເຕີ ຟຸກເດີ ຜູ້ຕາງໜ້າ ບໍລິສັດ ບົວລະພາ ກະສິກຳປ່າໄມ້ ໃນຂໍ້ 09, ສະບັບລົງວັນທີ 09 ກັນຍາ 2023 ເຫັນຄວນມອບໃຫ້ພະແນກແຜນການ ແລະ ການລົງທຶນນະຄອນຫຼວງວຽງຈັນ ລົງກວດກາຄືນສັນຍາດັ່ງກ່າວ ໂດຍສະເພາະແມ່ນການອະນຸຍາດຜ່ານມາອົງການປົກຄອງບ້ານມີສິດ ແລະ ພາລະບົດບາດ ໃນການອອກອະນຸຍາດ ຄືແນວໃດ? ແລ້ວສັງລວມລາຍງານຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດ;
3) ສະເໜີໃຫ້ເມືອງ ແລະ ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ສະໜອງຂໍ້ມູນ ບັນດາເອກະສານທີ່ຕິດພັນກັບໂຄງການດັ່ງກ່າວ ສົ່ງໃຫ້ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ເພື່ອເປັນຂໍ້ມູນຄົ້ນຄວ້າສັງລວມນຳສະເໜີລາຍງານການນຳ ນະຄອນຫຼວງວຽງຈັນ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ;
4) ສຳລັບການສະເໜີຂອງບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ທີ່ສະເໜີຂໍປູກໄມ້ອີກໃນເນື້ອທີ່ 30 ເຮັກຕາ ທີ່ນອນໃນເນື້ອທີ່ 68 ເຮັກຕາ 5.822 ຕາແມັດ ທີ່ບໍລິສັດໄດ້ຮັບສຳປະທານຈາກບ້ານ (ຕາມສັນຍາສະບັບລົງວັນທີ 09 ພຶດສະພາ 1993) ກອງປະຊຸມບໍ່ສາມາດຄົ້ນຄວ້າພິຈາລະນາໄດ້ເນື່ອງຈາກ ຜ່ານມາໄດ້ມີບົດບັນທຶກຄັ້ງວັນທີ 11 ສິງຫາ 2023. ຈຶ່ງເຫັນຄວນສະເໜີໃຫ້ບໍລິສັດເຮັດໜັງສືທວງຖາມການຈັດຕັ້ງປະຕິບັດຂອງອົງການກວດກາສູນກາງພັກ ປັດຈຸບັນສຳເລັດຄືແນວໃດ?
5) ສ່ວນພື້ນທີ່ດິນທີ່ຍັງເຫຼືອ ແລະ ບໍ່ໄດ້ມີຂໍ້ຂັດແຍ່ງ ຖ້າບໍລິສັດຈະເຂົ້າໄປປູກໄມ້ກະສິກຳ ແມ່ນເຫັນດີໃຫ້ເຂົ້າໄປປູກເພື່ອປ້ອງກັນການເຂົ້າຈັບຈອງພື້ນທີ່ຂອງປະຊາຊົນແຕ່ບົນພື້ນຖານການດຳເນີນເອກະສານທີ່ຖືກຕ້ອງ ສອດຄ່ອງຕາມກົດໝາຍ, ລະບຽບການຂອງການລົງທຶນກຳນົດໄວ້.

ຕໍ່ກັບມະຕິກອງປະຊຸມດັ່ງກ່າວ, ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄດ້ຄົ້ນຄວ້າບັນດານິຕິກຳທີ່ກ່ຽວຂ້ອງກັບການພິຈາລະນາໃນເມື່ອກ່ອນ ເຫັນວ່າ: ບໍ່ມີນິຕິກຳໃດໄດ້ລະບຸກ່ຽວກັບພາລະບົດບາດຂອງບ້ານທີ່ສາມາດອະນຸຍາດໄດ້ ແລະ ອີງໃສ່ ແຈ້ງການ ຂອງເມືອງໄຊທານີ ສະບັບເລກທີ 023/ຈມ.ຊທນ, ລົງວັນທີ 02 ກຸມພາ

2017 ເນື່ອງຈາກວ່າການສຳປະທານດິນດັ່ງກ່າວ ໃນໄລຍະຜ່ານມາແມ່ນບໍ່ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 14/ສພຊ, ລົງວັນທີ 05 ກໍລະກົດ 2012, ຄຳສັ່ງແນະນຳ ຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 05/ຈນວ, ລົງວັນທີ 16 ມິຖຸນາ 2009 ໃຫ້ຢຸດຕິການນຳເອົາດິນລວມໃຫ້ບຸກຄົນ, ນິຕິບຸກຄົນເຊົ່າ, ສຳປະທານ ຫຼື ເອົາແລກປ່ຽນກັບວັດຖຸສິ່ງຂອງ, ແລກປ່ຽນການກໍ່ສ້າງຕ່າງໆ ຢ່າງເດັດຂາດ ຖ້າເມືອງ ຫຼື ບ້ານມີຄວາມຈຳເປັນໃຫ້ນຳເອົາບັນຫາດັ່ງກ່າວສະເໜີຕໍ່ອົງການຄຸ້ມຄອງທີ່ດິນ ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ, ທຸກການອະນຸຍາດໃຫ້ເຊົ່າ ຫຼື ສຳປະທານ ຫຼື ມີສັນຍາແລກປ່ຽນຂອງເມືອງ ແລະ ບ້ານຜ່ານມາທີ່ບໍ່ຖືກຕ້ອງແມ່ນໃຫ້ລົບລ້າງ ແລະ ຢູ່ໃນມະຕິກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ່ VI ສະບັບເລກທີ 65/ສພຊ-VI, ລົງວັນທີ 30 ມິຖຸນາ 2010 ວ່າດ້ວຍການຄຸ້ມຄອງທີ່ດິນ ຢູ່ໃນມາດຕາທີ 2 ຂໍ້ 2 ແມ່ນບໍ່ໃຫ້ອົງການປົກຄອງບ້ານອະນຸມັດໃຫ້ເຊົ່າ ຫຼື ສຳປະທານທີ່ດິນລັດ ແລະ ທີ່ດິນລວມຂອງບ້ານໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນຢ່າງເດັດຂາດ.

**ທັດສະນະຂອງພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ເຫັນວ່າ :**

1) ອີງໃສ່ ແຈ້ງການ ຂອງເມືອງໄຊທານີ ສະບັບເລກທີ 023/ຈມ.ຊທນ, ລົງວັນທີ 02 ກຸມພາ 2017 ເນື່ອງຈາກວ່າການສຳປະທານດິນດັ່ງກ່າວ ໃນໄລຍະຜ່ານມາແມ່ນບໍ່ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 14/ສພຊ, ລົງວັນທີ 05 ກໍລະກົດ 2012, ຄຳສັ່ງແນະນຳ ຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 05/ຈນວ, ລົງວັນທີ 16 ມິຖຸນາ 2009 ໃຫ້ຢຸດຕິການນຳເອົາດິນລວມໃຫ້ບຸກຄົນ, ນິຕິບຸກຄົນເຊົ່າ, ສຳປະທານ ຫຼື ເອົາແລກປ່ຽນກັບວັດຖຸສິ່ງຂອງ, ແລກປ່ຽນການກໍ່ສ້າງຕ່າງໆ ຢ່າງເດັດຂາດ ຖ້າເມືອງ ຫຼື ບ້ານມີຄວາມຈຳເປັນໃຫ້ນຳເອົາບັນຫາດັ່ງກ່າວສະເໜີຕໍ່ອົງການຄຸ້ມຄອງທີ່ດິນນະຄອນຫຼວງວຽງຈັນ ເພື່ອພິຈາລະນາ, ທຸກການອະນຸຍາດໃຫ້ເຊົ່າ ຫຼື ສຳປະທານ ຫຼື ມີສັນຍາແລກປ່ຽນຂອງເມືອງ ແລະ ບ້ານຜ່ານມາທີ່ບໍ່ຖືກຕ້ອງແມ່ນໃຫ້ລົບລ້າງ ແລະ ຢູ່ໃນມະຕິກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ່ VI ສະບັບເລກທີ 65/ສພຊ-VI, ລົງວັນທີ 30 ມິຖຸນາ 2010 ວ່າດ້ວຍການຄຸ້ມຄອງທີ່ດິນ ຢູ່ໃນມາດຕາທີ 2 ຂໍ້ 2 ແມ່ນບໍ່ໃຫ້ອົງການປົກຄອງບ້ານອະນຸມັດໃຫ້ເຊົ່າ ຫຼື ສຳປະທານທີ່ດິນລັດ ແລະ ທີ່ດິນລວມຂອງບ້ານໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນຢ່າງເດັດຂາດ;
2) ສຳລັບ ສັນຍາສຳປະທານທີ່ດິນລັດ ຂອງ ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ກັບ ບ້ານຫາດກ້ຽງ ໃນວັນທີ 09 ພຶດສະພາ 1993 ເຫັນຄວນມອບໃຫ້ອົງການປົກຄອງເມືອງໄຊທານີ ລົບລ້າງສັນຍາດັ່ງກ່າວກ່ອນທີ່ຈະກ້າວເຂົ້າສູ່ສັນຍາສຳປະທານ ຮ່ວມກັບ ອົງການປົກຄອງນະຄອນຫຼວງວຽງຈັນ ເພື່ອໃຫ້ຖືກຕ້ອງສອດຄ່ອງຕາມລະບຽບການ.
3) ເພື່ອເປັນນິຕິກຳເບື້ອງຕົ້ນໃຫ້ແກ່ ໂຄງການດັ່ງກ່າວ ເຫັນຄວນໃຫ້ບໍລິສັດປະກອບຄຳຮ້ອງຂໍລົງທຶນ ເພື່ອຍື່ນຕໍ່ຫ້ອງການບໍລິການ ການລົງທຶນ ປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມການແບ່ງຂັ້ນຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ນຳສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ ຕາມກົດໝາຍ ມາດຕາ 45, 46 ວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ເພື່ອໃຫ້ສອດຄ່ອງ ຕາມແນວທາງຂອງພັກ-ລັດ ກຳນົດໄວ້;

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ ແລະ ໃຫ້ທິດຊີ້ນຳ ຕາມເຫັນສົມຄວນດ້ວຍ.

**ຫົວໜ້າພະແນກ**
**ຫົວໜ້າຫ້ອງການບໍລິການ ການລົງທຶນປະຕູດຽວ**
**ຂັ້ນນະຄອນຫຼວງວຽງຈັນ**

ພະແນກ ແຜນການ ແລະ ການລົງທຶນ
ກະຊວງແຜນການແລະການລົງທຶນ
ນະຄອນຫຼວງວຽງຈັນ

**ປອ.ນ.ບົວວອນ ສຸກລາແສງ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0065

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ຫ້ອງການ

ສຳນັກງານບໍລິຫານ ... ນວ
ໜ່ວຍງານບໍລິການປະຕູດຽວ
ເລກທີ: 309
ວັນທີ: 19. 1. 24

ເລກທີ........../ກຊສ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 11 ມັງກອນ 2024

# ໜັງສືທາງລັດຖະການ

ຮຽນ: ທ່ານ ຫົວໜ້າຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ ທີ່ນັບຖື.

ເລື່ອງ: ຕິດຕາມຄວາມຄືບໜ້າ ການແກ້ໄຂຄຳຮ້ອງຂອງອົງການປົກຄອງບ້ານດວງບຸດດີ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ໃນການຂໍສິດນຳໃຊ້ທີ່ດິນຄືນໃຫ້ແກ່ປະຊາຊົນ.

- ອີງຕາມກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ສະບັບເລກທີ 0569/ກຊສ, ລົງວັນທີ 23 ມີນາ 2023;
- ອີງຕາມບົດລາຍງານຂອງກົມທີ່ດິນ ສະບັບເລກທີ 4010/ກຊສ.ກທດ, ລົງວັນທີ 2 ພະຈິກ 2023;
- ອີງຕາມທິດຊີ້ນຳຂອງການນຳ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຄັ້ງວັນທີ 13 ພະຈິກ 2023.

ຫ້ອງການ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂໍຖືເປັນກຽດສະເໜີມາຍັງທ່ານຊາບວ່າ: ອົງການປົກຄອງບ້ານດວງບຸດດີ ໄດ້ເຮັດໜັງສືສະເໜີທວງຜົນການແກ້ໄຂຄຳຮ້ອງຂອງອົງການປົກຄອງບ້ານດວງບຸດດີ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ໃນການຂໍສິດນຳໃຊ້ທີ່ດິນຄືນໃຫ້ແກ່ປະຊາຊົນ ຫາກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມໜັງສືທາງລັດຖະການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 45/ຫສນຍ, ລົງວັນທີ 26 ມັງກອນ 2022 ຊຶ່ງທາງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ສົ່ງໜັງສືທາງລັດຖະການ ເຖິງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 0099/ກຊສ, ລົງວັນທີ 23 ມັງກອນ 2023 ພິຈາລະນາ ແກ້ໄຂບັນຫາດັ່ງກ່າວ ຕາມພາລະບົດບາດ. ຊຶ່ງປັດຈຸບັນເຫັນວ່າອົງການປົກຄອງເມືອງໄຊທານີ, ຫ້ອງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງບ້ານດວງບຸດດີ ໄດ້ຈັດກອງປະຊຸມປຶກສາຫາລື ກ່ຽວກັບທີ່ດິນຕອນດັ່ງກ່າວ ຕາມບົດບັນທຶກ ຄັ້ງວັນທີ 28 ສິງຫາ 2023 ຫຼັງຈາກນັ້ນ, ໄດ້ເຂົ້າລາຍງານກອງປະຊຸມທ່ານເຈົ້າຄອງ ແລະ ຮອງທ່ານເຈົ້າຄອງນະຄອງຫຼວງວຽງຈັນ ມີທິດຊີ້ນຳໃນການແກ້ໄຂ. ພ້ອມດຽວກັນນັ້ນ, ອີງຕາມການລາຍງານຂອງອົງການປົກຄອງເມືອງໄຊທານີ ໃນວັນທີ 27 ກັນຍາ 2023 ວ່າພະແນກແຜນການ ແລະ ການລົງທຶນນະຄອນຫຼວງວຽງຈັນ ໄດ້ຈັດກອງປະຊຸມຮ່ວມກັບພະແນກການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າປຶກສາຫາລື ກ່ຽວກັບການຂໍສືບຕໍ່ສຳປະທານຕອນດິນ 68 ເຮັກຕາ 5.822 ຕາແມັດ ຢູ່ບ້ານດວງບຸດດີ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ (ຕອນດິນທີ່ປະຊາຊົນ ບ້ານດວງບຸດດີ ຂໍສິດນຳໃຊ້ທີ່ດິນຄືນ) ຂອງບໍລິສັດ ບົວລະພາ (ສ່ວນຜົນກອງປະຊຸມແມ່ນຍັງບໍ່ມີຂໍ້ມູນ). ສະນັ້ນ, ເພື່ອຮັບປະກັນບໍ່ໃຫ້ເກີດການແກ້ໄຂບັນຫາຊໍ້າຊ້ອນກັນຂຶ້ນ ຈຶ່ງສະເໜີມາຍັງຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ ເປັນເຈົ້າການສືບຕໍ່ແກ້ໄຂບັນຫາດັ່ງກ່າວ ພາຍຫຼັງສຳເລັດການແກ້ໄຂແລ້ວ ໃຫ້ແຈ້ງຕອບຜົນການແກ້ໄຂໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນເວລາອັນຄວນດ້ວຍ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາ ຕາມຄວນດ້ວຍ.

ຫົວໜ້າຫ້ອງການ

ອານົງສອນ ພົມມະຈັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກົມທີ່ດິນ

ເລກທີ...4010.../ກຊສ.ກທດ
ນະຄອນຫຼວງວຽງຈັນ, ວັນທີ...02 NOV 2023...

# ບົດລາຍງານຫຍໍ້

ຮຽນ: ທ່ານ ລັດຖະມົນຕີ ທີ່ນັບຖື.
ເລື່ອງ: ລາຍງານຄວາມຄືບໜ້າການແກ້ໄຂບັນຫາ ຄຳຮ້ອງຂອງອົງການປົກຄອງ ບ້ານດວງບຸດດີ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ຂໍສິດນຳໃຊ້ທີ່ດິນຄືນໃຫ້ແກ່ປະຊາຊົນ.

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 0488/ກຊສ, ລົງວັນທີ 15 ມີນາ 2023 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມທີ່ດິນ;
- ອີງຕາມ ການຊີ້ນຳຂອງການນຳກະຊວງ ຄັ້ງວັນທີ 3 ຕຸລາ 2023;
- ອີງຕາມ ບົດບັນທຶກກອງປະຊຸມ ຄັ້ງວັນທີ 17 ຕຸລາ 2023;

ກົມທີ່ດິນ ຂໍຖືເປັນກຽດລາຍງານມາຍັງທ່ານລັດຖະມົນຕີ ຊາບວ່າ: ພາຍຫຼັງໄດ້ຮັບ ໜັງສືທາງລັດຖະການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 45/ຫສນຍ. ລົງວັນທີ 26 ມັງກອນ 2022. ກົມທີ່ດິນກໍໄດ້ຈັດກອງປະຊຸມ ຄົ້ນຄວ້າປຶກສາຫາລື ໃນວັນທີ 26 ເມສາ 2022 ແລະ ໄດ້ອອກຂໍ້ຕົກລົງ ສະບັບເລກທີ 3599/ກຊສ.ກທດ, ລົງວັນທີ 25 ກໍລະກົດ 2022 ແຕ່ງຕັ້ງຄະນະກຳມະການລົງກວດກາ, ເກັບກຳຂໍ້ມູນ ແລະ ສຳຫຼວດ-ວັດແທກທີ່ດິນ ດັ່ງກ່າວ. ໃນວັນທີ 29 ກໍລະກົດ 2022 ກົມທີ່ດິນໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງກວດກາທີ່ດິນຕົວຈິງ ຫຼັງຈາກນັ້ນຄະນະກຳມະການ ໄດ້ເຂົ້າລາຍງານຜົນການລົງກວດກາ, ເກັບກຳຂໍ້ມູນ ໃຫ້ທ່ານເຈົ້າເມືອງຮັບຊາບ ໃນວັນທີ 29 ສິງຫາ 2022. ຕໍ່ມາກົມທີ່ດິນໄດ້ເຮັດບົດລາຍງານທ່ານລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 6149/ກຊສ.ກທດ, ລົງວັນທີ 14 ພະຈິກ 2022, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ມີໜັງສືທາງລັດຖະການ ສະບັບເລກທີ 0099/ກຊສ, ລົງວັນທີ 23 ມັງກອນ 2023 ເຖິງ ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ພິຈາລະນາແກ້ໄຂບັນຫາທີ່ດິນດັ່ງກ່າວ ຕາມພາລະບົດບາດ. ຕໍ່ມາອົງການປົກຄອງ ບ້ານດວງບຸດດີ ໄດ້ເຮັດໜັງສືສະເໜີມາຍັງ ທ່ານລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 1218/ດບດ, ໃນວັນທີ 17 ສິງຫາ 2023 ເພື່ອທວງຄວາມຄືບໜ້າຂອງຄຳຮ້ອງຂໍໃຫ້ພິຈາລະນາ ມອບສິດນຳໃຊ້ທີ່ດິນຄືນໃຫ້ແກ່ປະຊາຊົນ ພາຍໃນບ້ານດວງບຸດດີ ສະບັບເລກທີ 982/ດບດ, ລົງວັນທີ 5 ມັງກອນ 2022.

ກົມທີ່ດິນ ໄດ້ກອງປະຊຸມ ຕິດຕາມຄວາມຄືບໜ້າການແກ້ໄຂບັນຫາດັ່ງກ່າວ ໃນວັນທີ 17 ຕຸລາ 2023 ກອງປະຊຸມໄດ້ຮັບຟັງການລາຍງານ ຄວາມຄືບໜ້າກ່ຽວກັບທີ່ດິນ ດັ່ງກ່າວຈາກຜູ້ຕາງໜ້າອົງການປົກຄອງເມືອງໄຊທານີ ແມ່ນໄດ້ຈັດກອງປະຊຸມ ຄັ້ງວັນທີ 28 ສິງຫາ 2023 ຫຼັງຈາກນັ້ນໄດ້ເຂົ້າລາຍງານກອງປະຊຸມທ່ານເຈົ້າຄອງ ແລະ ຮອງເຈົ້າຄອງນະຄອນຫຼວງວຽງຈັນ ປັດຈຸບັນຍັງລໍຖ້າທິດຊີ້ນຳໃນການແກ້ໄຂ ແລະ ເຫັນວ່າໃນວັນທີ 27 ກັນຍາ 2023 ພະແນກແຜນການ ແລະ ການລົງທຶນນະຄອນຫຼວງວຽງຈັນ ໄດ້ຈັດກອງປະຊຸມຮ່ວມກັບພະແນກການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າປຶກສາຫາລື ກ່ຽວກັບການຂໍສືບຕໍ່ສຳປະທານຕອນດິນ 68 ເຮັກຕາ

5.822 ຕາແມັດ ຢູ່ບ້ານດວງບຸດດີ, ເມືອງໄຊທານີ (ຕອນດິນທີ່ປະຊາຊົນບ້ານດວງບຸດດີຂໍສິດນຳໃຊ້) ຂອງ ບໍລິສັດ ບົວລະພາ (ສ່ວນຜົນກອງປະຊຸມຍັງບໍ່ທັນມີຂໍ້ມູນ).

❖ ຜ່ານການປຶກສາຫາລືກອງປະຊຸມໄດ້ເປັນເອກະພາບ ດັ່ງນີ້

1.ໃຫ້ຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ ເປັນເຈົ້າການລາຍງານການນຳນະຄອນຫຼວງວຽງຈັນ ຮັບຊາບສະພາບການດັ່ງກ່າວ ເພື່ອພິຈາລະນາໃຫ້ທິດຊີ້ນຳໃນການແກ້ໄຂ ແລະ ແຈ້ງຕອບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນເວລາອັນຄວນ;

2.ມອບໃຫ້ກົມທີ່ດິນ ຮ່າງໜັງສືແຈ້ງຕອບ ໃນນາມຫ້ອງການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງ ແວດລ້ອມ ໃຫ້ອົງການປົກຄອງບ້ານດວງບຸດດີ ຮັບຊາບກ່ຽວກັບຄວາມຄືບໜ້າ ໃນການຄົ້ນຄ້ວາ ບັນຫາດັ່ງກ່າວ.

ເນື່ອງຈາກບັນຫາດັ່ງກ່າວຍັງບໍ່ໄດ້ຮັບການແກ້ໄຂ ເພື່ອບໍ່ໃຫ້ເກີດບັນຫາໃໝ່ຂຶ້ນຊ້ຳຊ້ອນ ຈຶ່ງສະເໜີອອກໜັງສືທາງລັດຖະການ ໃນນາມຫ້ອງການ ກຊສ ເຖິງຫ້ອງວ່າການ ນະຄອນຫຼວງວຽງຈັນ ເປັນເຈົ້າການລາຍງານການນຳນະຄອນຫຼວງວຽງຈັນ ຮັບຊາບສະພາບການດັ່ງກ່າວ ແລະ ເຮັດໜັງສືແຈ້ງຕອບ ອົງການປົກຄອງບ້ານດວງບຸດດີ ຮັບຊາບກ່ຽວກັບຄວາມຄືບໜ້າ ໃນການຄົ້ນຄ້ວາ ບັນຫາດັ່ງກ່າວ. (ມີຮ່າງໜັງສືທາງລັດຖະການ ແລະ ຮ່າງໜັງສືແຈ້ງຕອບ ຄັດຕິດມາພ້ອມ)

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດ ຕາມທາງຄວນດ້ວຍ

ຫົວໜ້າກົມ

ວິລະນະ ສອນນະສິນ